ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

=====0000=====

ທະນາຄານແຫ່ງ ສປປລາວ

ສະຖາບັນການທະນາຄານ

ເລກທີ 1539 /ສທຄ

ນະຄອນຫລວງວຽງຈັນ, ວັນທີ 13 MAY 2016

# ຂໍ້ແຂ່ງຂັນ" ຮຽນດີ, ມີວິໄນ ແລະ ເຄື່ອນໄຫວດີ "

## ນັກສຶກສາສະຖາບັນການທະນາຄານ

## I. ຈຸດປະສົງຂອງການສ້າງຂໍ້ແຂ່ງຂັນ

- ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດກົດລະບຽບ ວ່າດ້ວຍການຄຸ້ມຄອງນັກສຶກສາ, ສະບັບເລກທີ 2306/ສທຄ, ລົງວັນທີ 08/10/2014 .
- ເພື່ອສະໜັບສະໜູນແນວທາງການສຶກສາຕາມ 3 ລັກສະນະ ແລະ 5 ຫລັກມູນການສຶກສາ.
- ເຮັດໃຫ້ນັກສຶກສາແຕ່ລະຄົນມີຄວາມສະດຸ້ງໄວ, ສະມັກໃຈຕື່ນຕົວປະຕິບັດລະບຽບ, ດ້ວຍຄວາມຮັບຜິດຊອບສູງ ແລະ ສ້າງໂອກາດໃຫ້ນັກສຶກສາແຕ່ລະຄົນ, ແຕ່ລະຫ້ອງໄດ້ມີການແຂ່ງຂັນກັນຮຽນດີ, ມີວິໄນ ແລະ ເຄື່ອນໄຫວດີ.
- ເຮັດໃຫ້ການຄຸ້ມຄອງນັກສຶກສາມີຄວາມສະດວກ, ໄປຕາມລະບຽບຫລັກການ, ແລະ ສາມາດປະເມີນຜົນໄດ້, ສາມາດຊອກໄດ້ຫ້ອງທີ່ມີຜົນງານດີເດັ່ນໃນຂະບວນການເຄື່ອນໄຫວ.

## II. ຫລັກການຂອງການແຂ່ງຂັນ

- ການແຂ່ງຂັນແມ່ນເລີ່ມຈາກນັກສຶກສາໂດຍອີງໃສ່ຄວາມຕື່ນຕົວ, ເປັນເຈົ້າການໃນການປະຕິບັດຂໍ້ແຂ່ງຂັນ;
- ນັກສຶກສາ, ຄະນະຫ້ອງ ແລະ ຄູປະຈໍາຫ້ອງຕ້ອງເຂົ້າໃຈເນື້ອໃນຂໍ້ແຂ່ງຂັນໃຫ້ເລິກເຊິ່ງ;
- ແຂ່ງຂັນລະຫວ່າງບຸກຄົນ ແລະ ຫ້ອງຕໍ່ຫ້ອງ;
- ໄລຍະເວລາຂອງການແຂ່ງຂັນໂດຍເລີ່ມເປີດຂໍ້ແຂ່ງຂັນໃນຕົ້ນສົກຮຽນ ແລະ ມີການສະຫລຸບຜົນການປະຕິບັດຂໍ້ແຂ່ງຂັນ 1 ເທື່ອ ໃນທ້າຍສົກຮຽນ ແລະ ຈະໄດ້ປະເມີນຜົນຕາມຕົວຊີ້ວັດທີ່ລະບຸໄວ້ໃນຂໍ້ແຂ່ງຂັນ.

## III. ເນື້ອໃນຂໍ້ແຂ່ງຂັນ " ຮຽນດີ, ມີວິໄນ ແລະ ເຄື່ອນໄຫວດີ "

1. ຮຽນດີ:

(1) ມີນັກສຶກສາຮຽນເກັ່ງໃນຫ້ອງໄດ້ຄະແນນສະເລັ່ຽສະສົມ 3,25 ກວມເອົາ 50 % ຂຶ້ນໄປ

(2) ມີການບໍາລຸງໃຫ້ກັນ (ນັກສຶກສາບໍາລຸງໃຫ້ກັນ)

(3) ມີອາຈານປະຈໍາວິຊາບໍາລຸງໃຫ້ ຖ້າຈໍາເປັນ

2. ມີວິໄນ:

(1) ມີໂຄງປະກອບການຈັດຕັ້ງຄົບຊຸດຕາມການກໍານົດຂອງສະຖາບັນການທະນາຄານ

(2) ລວມຫ້ອງເພື່ອສໍາຫລວດກວດກາກັນ 1 ເດືອນ ຕໍ່ ຄັ້ງ ໂດຍການເຂົ້າຮ່ວມຂອງຄູປະຈໍາຫ້ອງ.

(3) ຖືກຕັດຄະແນນການປະພຶດ (ຄະແນນຄຸນສົມບັດ) ບໍ່ເກີນ 5 % ຂອງນັກສຶກສາໃນຫ້ອງ

3. ເຄື່ອນໄຫວດີ:

(1) ກິດຈະກໍາຂອງ ສະຖາບັນການທະນາຄານ

- ເຄື່ອນໄຫວ ກິລາ, ສິນລະປະ, ຂ່າວສານ ແລະ ປະກອບສ່ວນອື່ນໆຕາມການມອບໝາຍ.
- ຄັງສະຫວັດດີການ : ເສັຍຄ່າສະມາຊິກໃຫ້ຄົບຕາມເວລາກໍານົດ.
- ຊ່ວຍເຫຼືອສັງຄົມ ເປັນປົກກະຕິ ໂດຍອີງຕາມການຈັດຕັ້ງຂຶ້ນໃນແຕ່ລະໄລຍະຂອງ ສທຄ ເຊັ່ນ : ບໍລິຈາກເລືອດ, ຊ່ວຍວັດຖຸອຸປະກອນ ແລະ ອື່ນໆ

(2) ກິດຈະກໍາຂອງຫ້ອງ

- ລວມຫ້ອງ : ມີຈໍານວນ ຄົນ ເຂົ້າຮ່ວມ 95% ຂຶ້ນໄປ.

- ກິດຈະກຳນອກຫຼັກສູດຂອງຫ້ອງ : ເຄື່ອນໄຫວປົກກະຕິຕາມການຈັດຕັ້ງຂອງຫ້ອງ ແລະ ໃນໜຶ່ງພາກຮຽນຕ້ອງໃຫ້ໄດ້ເຄື່ອນໄຫວຢ່າງໜ້ອຍ 2-3 ຄັ້ງ ຂຶ້ນໄປ ແລະ ມີສະມາຊິກຫ້ອງຮ່ວມເຄື່ອນໄຫວ 90% ຂຶ້ນໄປ.

## IV. ຄາດໝາຍສູ້ຊົນຂອງການແຂ່ງຂັນ

ພະແນກຄຸ້ມຄອງ ແລະ ກິດຈະກຳນັກສຶກສາ, ຄູປະຈຳຫ້ອງ, ຄູປະຈຳວິຊາ , ຄະນະຫ້ອງທຸກຫ້ອງ, 3 ອົງການຈັດຕັ້ງມະຫາຊົນພາຍໃນຫ້ອງ ແລະ ນັກສຶກສາທຸກຄົນ ຈົ່ງພ້ອມກັນເປັນຂະບວນຂໍ້ແຂ່ງຂັນ " ຮຽນດີ, ມີວິໄນ ແລະ ເຄື່ອນໄຫວດີ " ເຂົ້າໃນການປະຕິບັດວຽກງານຂອງຫ້ອງ. ໂດຍສົມທົບກັບຄູປະຈຳຫ້ອງເພື່ອສ້າງເປັນແຜນງານຈັດຕັ້ງປະຕິບັດຂໍ້ແຂ່ງຂັນໃຫ້ມີຜົນສຳເລັດໂດຍມີລະດັບຄາດໝາຍໃຫ້ໄດ້ 90% ຂຶ້ນໄປ.

## V. ຂັ້ນຕອນຈັດຕັ້ງປະຕິບັດ

- ພະແນກຄຸ້ມຄອງ ແລະ ຄູປະຈຳຫ້ອງຕ້ອງເຜີຍແຜ່ໃຫ້ນັກສຶກສາທຸກຄົນຮັບຊາບ ແລະ ເຂົ້າໃຈໃນແຕ່ລະສົກຮຽນ.
- ມອບໃຫ້ຄູປະຈຳຫ້ອງ, ຄະນະຫ້ອງ ແລະ ນັກສຶກສາທຸກຄົນເປັນເຈົ້າການຈັດຕັ້ງປະຕິບັດ.
- ແຕ່ລະເດືອນຕ້ອງມີການສະຫລຸບຜົນການຈັດຕັ້ງປະຕິບັດ, ບັນຫາໃດທີ່ປະຕິບັດສຳເລັດ ແລະ ບັນຫາໃດຍັງຄ້າງ ແລະ ຈະສືບຕໍ່ແນວໃດເພື່ອໃຫ້ສຳເລັດຕາມຄາດໝາຍທີ່ວາງໄວ້ ( ສະເພາະຫ້ອງ ).
- ພະແນກຄຸ້ມຄອງ ແລະ ກິດຈະກຳນັກສຶກສາ ຈະເປັນຜູ້ລວບລວມຂໍ້ມູນ ແລະ ຕິດຕາມກວດກາ ເພື່ອລາຍງານຕໍ່ຂັ້ນເທິງຮັບຊາບ ແລະ ສະເໜີການຍ້ອງຍໍຕາມແຕ່ລະປະເພດ.

## VI. ຮູບການແຂ່ງຂັນ

1. ແຂ່ງຂັນປົກກະຕິ: ສົກຮຽນໜຶ່ງຈະໄດ້ປະເມີນ 1 ຄັ້ງ ເປັນການແຂ່ງລະຫວ່າງບຸກຄົນ, ຫ້ອງຕໍ່ຫ້ອງ.
2. ການແຂ່ງຂັນແມ່ນມອບໝາຍໃຫ້ບຸກຄົນກໍຄືການຈັດຕັ້ງຫ້ອງໂດຍສົມທົບກັບຄູປະຈຳຫ້ອງຈັດຕັ້ງປະຕິບັດໃນແຕ່ລະເດືອນ, ພາກຮຽນ ແລະ ສົກຮຽນ.

## VII. ຮູບການຍ້ອງຍໍ

1. ພາຍຫຼັງປະເມີນແລ້ວຈະມີການຈັດປະເພດເພື່ອຂໍການຍ້ອງຍໍຈາກສະຖາບັນການທະນາຄານ.
2. ພະແນກຄຸ້ມຄອງ ແລະ ກິດຈະກຳນັກສຶກສາ ເປັນຜູ້ສ້າງແຜນການເພື່ອຍ້ອງຍໍໃນປະເພດຕ່າງໆ.

ຫົວໜ້າສະຖາບັນການທະນາຄານ

ບ່ອນສົ່ງ:

| | | |
|---|---|---|
| 1. | ສຳເນົາ | 1 ສະບັບ |
| 2. | ຄະນະສະຖາບັນ ຜູ້ລະ | 1 ສະບັບ ເພື່ອຊາບ |
| 3. | ພະແນກລະ | 1 ສະບັບ |
| 4. | ຄູປະຈຳຫ້ອງ ແລະ ຄະນະຫ້ອງ | 1 ສະບັບ |

ສະຖາບັນການທະນາຄານ ແຫ່ງ ສປປ ລາວ

ດວງດີ ພົມວົງສາ